ບໍລິສັດ ມະຫາທຶນ ເຊົ່າສິນເຊື່ອ ມະຫາຊົນ
628 ບ້ານ: ໂພນພະເນົາ ກມ5
ຖະໜົນ: ໄກສອນພົມວິຫານ ເມືອງ: ໄຊເສດຖາ
ນະຄອນຫຼວງວຽງຈັນ ໂທ-ແຟັກ:(+856 21)418062 – 6

# ຄຳສັ່ງ

## ສະບັບທີ 3 / 2020

### ເລື່ອງ: ແຜນບໍລິຫານຄວາມສ່ຽງ ສະບັບວັນທີ 16/12/2019

ຕາມລະບຽບປະຕິບັດເລື່ອງນະໂຍບາຍ ແລະ ການບໍລິຫານຄວາມສ່ຽງ (Risk Policy and management) ປີ 2018 ທີ່ກຳນົດໃຫ້ບໍລິສັດ ຕ້ອງທົບທວນແຜນບໍລິຫານຄວາມສ່ຽງ (Risk Management Plan) ຢ່າງນ້ອຍປີລະ 1 ຄັ້ງ ເພື່ອໃຊ້ເປັນແນວທາງປະຕິບັດ ສຳລັບຄວບຄຸມລະດັບຄວາມສ່ຽງຂອງບໍລິສັດ ໃຫ້ຢູ່ໃນລະດັບທີ່ຍອມຮັບໄດ້ນັ້ນ ບໍລິສັດ ໄດ້ຈັດເຮັດແຜນບໍລິຫານຄວາມສ່ຽງ ສະບັບລົງວັນທີ 16 ທັນວາ 2019 ເພື່ອໃຫ້ທຸກໜ່ວຍງານທີ່ກ່ຽວຂ້ອງໃຊ້ອ້າງອີງ ແລະ ເປັນແນວທາງໃນການປະຕິບັດຕາມດັ່ງນີ້:

1. **ແຜນບໍລິຫານຄວາມສ່ຽງ (Risk Management Plan) ຕາມຄຳສັ່ງສະບັບນີ້ເອີ້ນວ່າແຜນບໍລິຫານຄວາມສ່ຽງ ສະບັບວັນທີ 16/12/2019**
2. **ປະເດັນຄວາມສ່ຽງທີ່ສຳຄັນ ຈາກການປະເມີນໃນຄັ້ງນີ້ມີທັງໝົດ 7 ຫົວເລື່ອງ ລຽງຕາມລຳດັບຄວາມສ່ຽງສູງດັ່ງນີ້:**

2.1. ຄວາມສ່ຽງດ້ານອັດຕາແລກປ່ຽນເງິນຕາ (Currency Risk) - ມີຄວາມສ່ຽງ Critical Risk ເຊິ່ງເພີ່ມຂຶ້ນຈາກປີກ່ອນ High Risk (ປີກ່ອນຢູ່ລຳດັບທີ 4)

2.2. ຄວາມສ່ຽງດ້ານການໂອນກຳມະສິດໃນລົດຈັກໃຫ້ແກ່ລູກຄ້າ ຫຼັງຊຳລະຄ່າເຊົ່າຊື້ຄົບແລ້ວ (Vehicle Owner Transfer) - ມີຄວາມສ່ຽງ Critical Risk ເຊິ່ງເທົ່າກັນກັບປີກ່ອນ (ປີກ່ອນຢູ່ລຳດັບທີ 1)

2.3. ຄວາມສ່ຽງດ້ານການເພີ່ມຂຶ້ນຂອງຄ່າສຳຮອງໜີ້ ອັນເນື່ອງມາຈາກມາດຕະຖານບັນຊີ IFRS (Increasing of bad debt provision due to IFRS) – ມີຄວາມສ່ຽງ High Risk ເຊິ່ງເປັນຄວາມສ່ຽງໃໝ່ທີ່ຈັດລຳດັບໃນປີນີ້

2.4. ຄວາມສ່ຽງດ້ານສະພາວະວິກິດຈາກເສດຖະກິດຂອງປະເທດລາວ (Lao Economic Crisis) – ມີຄວາມສ່ຽງ High Risk ເຊິ່ງເປັນຄວາມສ່ຽງໃໝ່ທີ່ຈັດລຳດັບໃນປີນີ້

2.5. ຄວາມສ່ຽງດ້ານຜົນຂາດທຶນຈາກຄຸນນະພາບໜີ້ (Credit Loss) – ມີຄວາມສ່ຽງ High Risk ເຊິ່ງເທົ່າກັນກັບປີກ່ອນ (ປີກ່ອນຢູ່ລຳດັບທີ 3)

2.6. ຄວາມສ່ຽງດ້ານສ່ວນແບ່ງການຕະຫຼາດ ແລະ ລາຍໄດ້ຫຼຸດລົງ (Market Share and Income Decreasing) - ມີຄວາມສ່ຽງ High Risk ເຊິ່ງເທົ່າກັນກັບປີກ່ອນ (ປີກ່ອນຢູ່ລຳດັບທີ 2)

2.7. ຄວາມສ່ຽງດ້ານຄວາມເສຍຫາຍ ຫຼື ການຫຼຸດລົງຂອງມູນຄ່າຊັບສິນ (Devalue of Asset) - ມີຄວາມສ່ຽງ Moderate Risk ເຊິ່ງມີຄວາມສ່ຽງຫຼຸດລົງຈາກປີກ່ອນ High Risk (ປີກ່ອນຢູ່ໃນລຳດັບທີ 5)

**3. ປະເດັນຄວາມສ່ຽງທີ່ສຳຄັນໃນປີກ່ອນ ທີ່ມີການບໍລິຫານຈັດການຄວາມສ່ຽງ ແລະ ບໍ່ຢູ່ໃນ 7 ລຳດັບທຳອິດດັ່ງນີ້:**

3.1. ຄວາມສ່ຽງດ້ານລະບົບງານຄອມພິວເຕີໃຊ້ງານບໍ່ໄດ້ (Computer System Failure) - ມີຄວາມສ່ຽງ Moderate Risk ເຊິ່ງມີຄວາມສ່ຽງຫຼຸດລົງຈາກປີກ່ອນ High Risk (ປີກ່ອນຢູ່ໃນລຳດັບທີ 6)

3.2. ຄວາມສ່ຽງດ້ານຄວາມສາມາດໃນການຊຳລະຄືນເງິນກູ້ (Loan Payment Capacity) - ມີຄວາມສ່ຽງ Moderate Risk ເຊິ່ງເທົ່າກັນກັບປີກ່ອນ (ປີກ່ອນຢູ່ໃນລະດັບທີ 7)

ຄຳສັ່ງສະບັບນີ້ ມີຜົນບັງຄັບໃຊ້ຕັ້ງແຕ່ວັນທີ 15 ກຸມພາ 2020 ເປັນຕົ້ນໄປ

ສັ່ງເມື່ອ ວັນທີ 14 ກຸມພາ 2020

**ຜູ້ອຳນວຍການໃຫຍ່**

.................................

(ທ່ານ ມານົບ ຕຣີລິດວິໄລ)